# ພິທີມອບ-ຮັບໃບຍ້ອງຍໍໃຫ້ພະນັກງານ

ໃນຕອນບ່າຍ ວັນພະຫັດ, ວັນທີ 31 ມີນາ 2022 ທະນາຄານການຄ້າຕ່າງປະເທດລາວ ໄດ້ຈັດພິທີມອບ-ຮັບ ໃບຍ້ອງຍໍໃຫ້ພະນັກງານ ຢູ່ທີ່ຫ້ອງປະຊຸມຊັ້ນ 5 ທຄຕລ, ໂດຍການເປັນປະທານຂອງ **ທ່ານ ຄຳພຸດ ສິດທິລາດ** ຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ, ມີບັນດາຄະນະອຳນວຍການ, ຄະນະພະແນກ, ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນ, ຄະນະຂະແໜງ ແລະ ພະນັກງານເຂົ້າຮ່ວມທັງໝົດຈຳນວນ **28** ທ່ານ**,** ຍິງ **08** ທ່ານ**.**






ໃນພິທີດັ່ງກ່າວ **ທ່ານ ລັດສະໝີ ດໍາລົງບຸນ** ຫົວໜ້າພະແນກຈັດຕັ້ງ-ພະນັກງານ ໄດ້ຂຶ້ນຜ່ານຂໍ້ຕົກລົງຍ້ອງຍໍພະນັກງານ ເຊິ່ງມີທັງໝົດ **5** ຂໍ້ຕົກລົງ ດັ່ງນີ້:

1. ຂໍ້ຕົກລົງວ່າດ້ວຍການຍ້ອງຍໍບຸກຄົນທີ່ມີຜົນງານດີເດັ່ນຈາກປະທານສະພາບໍລິຫານ ທຄຕລ ໃນການເຂົ້າຮ່ວມແຂ່ງຂັນ ICT AWARD ປະຈໍາປີ 2019 ເຊິ່ງໄດ້ຮັບລາງວັນຮອງຊະນະເລີດ ອັນດັບທີ 2 ຂອງອາຊ້ຽນ ຈໍານວນ **6** ທ່ານ.
2. ຂໍ້ຕົກລົງວ່າດ້ວຍການຍ້ອງຍໍບຸກຄົນທີ່ມີຜົນງານດີເດັ່ນຈາກຜູ້ອໍານວຍການ ທຄຕລ ໃນການເຂົ້າຮ່ວມແຂ່ງຂັນ ICT AWARD ປະຈໍາປີ **2019** ເຊິ່ງໄດ້ຮັບລາງວັນຊະນະເລີດອັນດັບທີ 1 ຂອງປະເທດລາວ ຈໍານວນ **5** ທ່ານ.
3. ຂໍ້ຕົກລົງວ່າດ້ວຍການຍ້ອງຍໍບຸກຄົນດີເດັ່ນຈາກຜູ້ອໍານວຍການ ທຄຕລ ທີ່ມີຜົນງານປະກອບສ່ວນໃນການພັດທະນາປ່ຽນຖ່າຍລະບົບ core banking ໃໝ່ ຂອງ ທຄຕລ ເຊິ່ງມີທັງໝົດ **249** ທ່ານ ຈາກບັນດາພະແນກ, ສູນ ແລະ ສາຂາທົ່ວລະບົບ.
4. ຂໍ້ຕົກລົງວ່າດ້ວຍການຍ້ອງຍໍບຸກຄົນດີເດັ່ນຈາກຜູ້ອໍານວຍການ ທຄຕລ ທີ່ມີຜົນງານໃນການປະກອບສ່ວນວຽກງານສະຫຼຸບບັນຊີທ້າຍປີ **2021** ໄດ້ຮັບຜົນສໍາເລັດກ່ອນຄາດໝາຍທີ່ວາງໄວ້ ຈໍານວນ **30** ທ່ານ ຈາກພະແນກບັນຊີສັງລວມ ແລະ ສູນໄອທີ.
5. ຂໍ້ຕົກລົງວ່າດ້ວຍການຍ້ອງຍໍບຸກຄົນດີເດັ່ນຈາກຜູ້ອໍານວຍການ ທຄຕລ ທີ່ມີຜົນງານໃນການປະກອບສ່ວນແກ້ໄຂໜີ້ສິນຂອງ ທຄຕລ ຈໍານວນ **13** ທ່ານ.



ພ້ອມດຽວກັນນັ້ນ, ໃນພິທີໄດ້ຮັບກຽດຈາກ **ທ່ານ ຄໍາພຸດ ສິດທິລາດ** ຜູ້ອໍານວຍການ ທະນາຄານການຄ້າຕ່າງປະເທດລາວ ຂຶ້ນມອບໃບຍ້ອງຍໍໃຫ້ບັນດາທ່ານຕົວແທນແຕ່ລະພາກສ່ວນ.